# ສະຫຼຸບນະໂຍບາຍກ່ຽວກັບໂຄງການ Medical Financial Assistance

Kaiser Permanente ມີໂຄງການ Medical Financial Assistance (MFA) ເພື່ອຊ່ວຍຄືນເງິນໃນການຈ່າຍຄ່າເບິ່ງແຍງດູແລ. ໂຄງການນີ້ອາດຈະຄຸ້ມຄອງຄ່າໃຊ້ຈ່າຍທັງໝົດ ຫຼື ບາງສ່ວນຂອງທ່ານ ສຳລັບການເບິ່ງແຍງດູແລທີ່ຈຳເປັນ, ລວມທັງຢາປິ່ນປົວພະຍາດ, ທີ່ Kaiser Permanente ສະໜອງໃຫ້. ການໄດ້ຮັບຄວາມຊ່ວຍເຫຼືອແມ່ນຂຶ້ນຢູ່ກັບຄວາມຕ້ອງການທາງດ້ານການເງິນຕາມທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້.

## ຜູ້ທີ່ມີເງື່ອນໄຂໄດ້ຮັບແມ່ນມີໃຜແດ່?

ທ່ານອາດຈະມີເງື່ອນໄຂໄດ້ຮັບ ຖ້າທ່ານມີລາຍໄດ້ຕ່ຳ, ບໍ່ມີປະກັນໄພ ຫຼື ມີປະກັນໄພຕ່ຳ. ໂດຍທົ່ວໄປ, ທ່ານຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນ:

- ຖ້າລາຍຮັບຄົວເຮືອນຂອງທ່ານຢູ່ທີ່ ຫຼື ຕ່ຳກວ່າ 300% ຂອງຄຳແນະນຳວ່າດ້ວຍຄວາມທຸກຍາກຂອງລັດຖະບານກາງ
- ຫຼື ຖ້າທ່ານມີຄ່າໃຊ້ຈ່າຍທາງການແພດທີ່ສູງຫຼາຍເມື່ອທຽບກັບລາຍຮັບຂອງທ່ານ

## ສິ່ງທີ່ໂຄງການຈະຈ່າຍແມ່ນມີຫຍັງແດ່?

ໂຄງການ MFA ສາມາດຊ່ວຍທ່ານຈ່າຍຄ່າການເບິ່ງແຍງດູແລທີ່ຈຳເປັນທີ່ Kaiser Permanente ສະໜອງໃຫ້. ນີ້ປະກອບດ້ວຍການເບິ່ງແຍງດູແລສຸກເສີນ ແລະ ຮີບດ່ວນ ແລະ ການບໍລິການຮ້ານຂາຍຢາ. ໂຄງການນີ້ອາດຈະຄຸ້ມຄອງໃບບິນຮຽກເກັບເງິນແບບເຕັມສ່ວນ ຫຼື ບາງສ່ວນ.

ໂຄງການຈະບໍ່ຈ່າຍສຳລັບ:

- ການຂົນສົ່ງທາງການແພດ
- ເບັ້ຍປະກັນໄພສຸຂະພາບ
- ຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງກັບການສັນຍະກຳເພື່ອຄວາມງາມ, ການເບິ່ງແຍງດູແລພາວະມີລູກຍາກ ຫຼື ການຖືພາ
- ການເບິ່ງແຍງດູແລສຸຂະພາບທີ່ສະໜອງໃຫ້ຢູ່ນອກ Kaiser Permanente
- ການເບິ່ງແຍງດູແລທີ່ຜູ້ໃຫ້ບໍລິການຂອງ Kaiser Permanente ຕັດສິນໃຈວ່າບໍ່ມີຄວາມຈຳເປັນທາງການແພດ

ສຳລັບບັນຊີລາຍຊື່ສະບັບເຕັມ, ໃຫ້ອ່ານນະໂຍບາຍກ່ຽວກັບໂຄງການ MFA ຢູ່ທີ່ kp.org/mfa (ເປັນພາສາອັງກິດ).

## ຂ້າພະເຈົ້າຈະສະໝັກໄດ້ແນວໃດ?

ທ່ານສາມາດສະໝັກໄດ້ທາງອອນລາຍ, ທາງໄປສະນີ, ແຟັກ ຫຼື ດ້ວຍຕົນເອງ. ວິທີທີ່ໄວທີ່ສຸດໃນການສະໝັກແມ່ນເຂົ້າໄປທີ່ kp.org/mfa (ເປັນພາສາອັງກິດ) ແລະ ລົງທະບຽນເພື່ອຮັບລິ້ງເຊື່ອມຕໍ່ໄປຍັງຄຳຮ້ອງຂໍສະໝັກທາງອອນລາຍທີ່ປອດໄພຂອງພວກເຮົາ. ຄຳຮ້ອງຂໍສະໝັກທາງອອນລາຍຈະຖາມຊຸດຄຳຖາມຈຳນວນໜຶ່ງ ເພື່ອຕັດສິນການມີເງື່ອນໄຂໄດ້ຮັບຂອງທ່ານ.

ນອກຈາກນັ້ນ, ທ່ານກໍຍັງສາມາດຮັບຄຳຮ້ອງຂໍສະໝັກເປົ່າໄດ້ຢູ່ທີ່ kp.org/mfa (ເປັນພາສາອັງກິດ) ອີກດ້ວຍ.

ທ່ານສາມາດສະໝັກໄດ້ທຸກເວລາໃນຂັ້ນຕອນການຮັບເຂົ້າ ຫຼື ການອອກໃບບິນຮຽກເກັບເງິນ. ທ່ານບໍ່ຈຳເປັນຕ້ອງລໍຖ້າໃບບິນຮຽກເກັບເງິນ ເພື່ອຂໍຄວາມຊ່ວຍເຫຼືອ.

ໃນບາງກໍລະນີ, ໂຄງການ MFA ອາດຈະຊ່ວຍຈ່າຍຄ່າການເບິ່ງແຍງດູແລຂອງທ່ານ ໂດຍທີ່ທ່ານບໍ່ຈຳເປັນຕ້ອງສະໝັກ.

ຖ້າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອ, ພວກເຮົາຈະບໍ່ຮຽກເກັບຄ່າບໍລິການຈາກທ່ານຫຼາຍກວ່າຈຳນວນທີ່ຮຽກເກັບໂດຍທົ່ວໄປ (AGB) ສຳລັບການເບິ່ງແຍງດູແລດັ່ງກ່າວ. ເຂົ້າເບິ່ງ kp.org/mfa (ເປັນພາສາອັງກິດ) ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບ AGB.

## ຂ້າພະເຈົ້າຈຳເປັນຕ້ອງມີຂໍ້ມູນຫຍັງແດ່ ເພື່ອສະໝັກ?

ໂຄງການຈະຂໍຂໍ້ມູນຕໍ່ໄປນີ້ຈາກທ່ານ ໃນເວລາທີ່ທ່ານສະໝັກ:

- ຂໍ້ມູນຂະໜາດຄົວເຮືອນ ແລະ ລາຍຮັບຂອງຜູ້ໃຫຍ່ໝົດທຸກຄົນໃນຄົວເຮືອນ
- ຄ່າໃຊ້ຈ່າຍໃນການເບິ່ງແຍງດູແລສຸຂະພາບ ຖ້າຮູ້
- ເອກະສານຫຼັກຖານຢັ້ງຢືນລາຍຮັບ

ການໃຫ້ເອກະສານຫຼັກຖານຢັ້ງຢືນລາຍຮັບຈະຊ່ວຍພວກເຮົາໃນການຕັດສິນວ່າທ່ານມີຄຸນສົມບັດໄດ້ຮັບ ຫຼື ບໍ່.

*(ຕໍ່ຈາກດ້ານໜ້າ)*

**ຂ້າພະເຈົ້າຈະຮູ້ວ່າຄຳຮ້ອງຂໍສະໝັກຂອງຕົນໄດ້ຮັບການອະນຸມັດແລ້ວເມື່ອໃດ?**
ຖ້າຄຳຮ້ອງຂໍສະໝັກຂອງທ່ານສົມບູນຄົບຖ້ວນແລ້ວ, ພວກເຮົາຈະສົ່ງຈົດໝາຍມາໃຫ້ທ່ານພ້ອມກັບຄຳຕັດສິນຂອງພວກເຮົາພາຍໃນ 30 ວັນລັດຖະການ. ຖ້າພວກເຮົາປະຕິເສດຄຳຮ້ອງຂໍຂອງທ່ານ, ຈົດໝາຍດັ່ງກ່າວຈະມີຄຳແນະນຳກ່ຽວກັບວິທີການອຸທອນ.

ຖ້າຄຳຮ້ອງຂໍສະໝັກຂອງທ່ານບໍ່ສົມບູນຄົບຖ້ວນ, ພວກເຮົາຈະຕິດຕໍ່ຫາທ່ານ. ພວກເຮົາຈະກຳນົດວັນທີທີ່ທ່ານຈຳເປັນຕ້ອງໃຫ້ຂໍ້ມູນທີ່ຂາດຫາຍໄປ. ຖ້າຄຳຮ້ອງຂໍສະໝັກຂອງທ່ານຍັງຄົງບໍ່ສົມບູນຄົບຖ້ວນອີກ, ທ່ານອາດຈະບໍ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນ.

**ຂ້າພະເຈົ້າສາມາດຂໍຂໍ້ມູນເພີ່ມຕື່ມໄດ້ຢູ່ໃສແດ່?**
ທ່ານສາມາດຂໍຂໍ້ມູນເພີ່ມຕື່ມ ແລະ ນະໂຍບາຍກ່ຽວກັບ MFA ແລະ ຄຳຮ້ອງຂໍສະໝັກໄດ້ທີ່ kp.org/mfa (ພາສາອັ ງກິດ). ຂໍ້ມູນແມ່ນມີໃຫ້ເປັນຫຼາຍພາສາ ໃນຮູບແບບທີ່ສາມາດເຂົ້າເຖິງໄດ້ດ້ວຍໂປແກມອ່ານໜ້າຈໍ. ນອກຈາກນັ້ນ, ທ່ານກໍຍັງສາມາດໂທຫາເບີ **808-432-7940** ຫຼື **1-800-598-5928** (TTY **711**) ໄດ້ອີກດ້ວຍ.

## ການຊ່ວຍເຫຼືອທາງດ້ານການເງິນອື່ນໆ

**ການຂໍຄວາມຊ່ວຍເຫຼືອໃນການຈ່າຍຄ່າເບິ່ງແຍງດູແລສຸຂະພາບ**
ຖ້າທ່ານບໍ່ມີການຄຸ້ມຄອງການເບິ່ງແຍງດູແລສຸຂະພາບ, Kaiser Permanente ສາມາດຊ່ວຍໄດ້. ເພື່ອສຶກສາເພີ່ມເຕີມ, ໂທຫາເບີ **1-800-479-5764** (TTY **711**) ວັນຈັນ ເຖິງ ວັນສຸກ, ແຕ່ 9 ໂມງເຊົ້າ ຫາ 5 ໂມງແລງ.

**ການຂໍຄວາມຊ່ວຍເຫຼືອດ້ານຄ່າຄອງຊີບ**
ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອກ່ຽວກັບສິ່ງຈຳເປັນຕ່າງໆ ເຊັ່ນ: ອາຫານ, ທີ່ພັກອາໄສ, ການຈ່າຍຄ່າອິນເຕີເນັດ ຫຼື ຄ່າສາທາລະນຸປະໂພກອື່ນໆ, ໃຫ້ເຂົ້າໄປທີ່ kp.org/socialhealth. ຫຼື ໂທຫາສູນຊ່ວຍເຫຼືອຊຸມຊົນ ທີ່ເບີ **1-800-443-6328** (TTY **711**), ວັນຈັນ ເຖິງ ວັນສຸກ, ແຕ່ເວລາ 8 ໂມງເຊົ້າ ຫາ 5 ໂມງແລງ.

**ສຶກສາກ່ຽວກັບຄ່າໃຊ້ຈ່າຍໃນການເບິ່ງແຍງດູແລລ່ວງໜ້າ**
ທ່ານສາມາດຂໍລາຄາສຳລັບການບໍລິການເບິ່ງແຍງດູແລສຸຂະພາບຫຼາຍກວ່າ 300 ລາຍການໄດ້ຢູ່ທີ່ kp.org/price-transparency.
ລາຄາສຳລັບການບໍລິການບາງລາຍການແມ່ນຂຶ້ນຢູ່ກັບໄລຍະເວລາຂອງການພັກຮັກສາໃນໂຮງໝໍປົກກະຕິ. ການເບິ່ງແຍງດູແລສ່ວນບຸກຄົນທີ່ຈຳເປັນ ອາດຈະມີການປ່ຽນແປງລາຄາ.

## ວິທີການຂໍສຳເນົານະໂຍບາຍກ່ຽວກັບ MFA, ຄຳຮ້ອງຂໍສະໝັກ ແລະ ຂໍ້ມູນໂຄງການ

**ທາງອອນລາຍ**
kp.org/mfa (ເປັນພາສາອັງກິດ)

**ທາງໂທລະສັບ**
ໂທຫາ 808-432-7940 ຫຼື
1-800-598-5928 (TTY 711)

## ວິທີຕ່າງໆໃນການສະໝັກ

**ສະໝັກທາງອອນລາຍ**
kp.org/mfa (ເປັນພາສາອັງກິດ)

**ທາງແຟັກ**
ແຟັກຄຳຮ້ອງຂໍສະໝັກທີ່ຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວຂອງທ່ານໄປທີ່ 808-432-7950

**ທາງໄປສະນີ**
ສົ່ງຄຳຮ້ອງຂໍສະໝັກທີ່ຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວຂອງທ່ານທາງໄປສະນີໄປຍັງ:

Kaiser Permanente
Attn: MFA Program -
Business Services
3288 Moanalua Road
Honolulu, HI 96819

**ໄປສົ່ງດ້ວຍຕົວເອງ**
ນຳໃບຄຳຮ້ອງຂໍທີ່ຕື່ມຂໍ້ມູນໃສ່ແລ້ວຂອງທ່ານໄປສົ່ງຢູ່ທີ່ສະຖານພະຍາບານຂອງ Kaiser Permanente ແຫ່ງໃດກໍໄດ້

**ພົບກັບທີ່ປຶກສາດ້ານການເງິນ**
ໂທຫາພວກເຮົາ ທີ່ເບີ **808-432-7940** ຫຼື **1-800-598-5928**, ວັນຈັນ ເຖິງ ວັນສຸກ, ເວລາ 8:30 ໂມງເຊົ້າ ຫາ 5 ໂມງແລງ. ຕາມເວລາຣາວາຍ ເພື່ອຊອກຫາສະຖານປິ່ນປົວຂອງ Kaiser Permanente ທີ່ຢູ່ໃກ້ທີ່ສຸດທີ່ໃຫ້ການຊ່ວຍເຫຼືອໃນການຍື່ນໃບສະໝັກຂອງທ່ານແບບເຊິ່ງໜ້າ.

© Kaiser Foundation Hospitals; Kaiser Foundation Health Plan of Hawaii

DS-1920 (05-24) HAWAII LAOTIAN

KAISER PERMANENTE®

# NOTICE OF LANGUAGE ASSISTANCE SERVICES

**English:** If you need help in your language, language assistance is available at no cost to you, 24 hours a day, 7 days a week (closed holidays). Call our Member Service Contact Center at 1-800-966-5955 (TTY 711) for help or visit any registration desk for more information at any Kaiser Permanente hospital, Monday through Friday, 8 a.m. to 5 p.m. Aids and services for people with disabilities, like documents in braille, large print, audio, and other accessible electronical formats are also available.

**Chinese：** 如果您需要使用您的语言获得帮助，我们每周 7 天、每天 24 小时免费提供语言帮助（节假日休息）。请致电 1-800-966-5955 (TTY 711) 联络我们的会员服务联络中心以寻求帮助，或前往任何 Kaiser Permanente 医院的登记台了解更多信息，我们的服务时间为周一至周五上午 8 点至下午 5 点。我们还为残疾人提供辅助工具和服务，例如盲文、大字体、音频和其他无障碍电子格式的文档。

**Spanish:** Si necesita ayuda en su idioma, contamos con asistencia de idiomas sin costo alguno para usted las 24 horas del día, los 7 días de la semana (excepto los días festivos). Comuníquese con nuestra Central de Llamadas de Servicio a los Miembros al 1-800-966-5955 (TTY 711) para obtener ayuda. O visite el mostrador de recepción en cualquier hospital de Kaiser Permanente para obtener más información, de lunes a viernes, de 8 a. m. a 5 p. m. También ofrecemos ayudas y servicios para personas con discapacidades, como documentos en braille, letra grande, audio y otros formatos electrónicos accesibles.



KAISER PERMANENTE®